ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 4356/ຫກ
ນະຄອນຫຼວງວຽງຈັນ, ວັນທີ 03 ພະຈິກ 2026

ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງການເງິນ ຂໍເຊີນບັນດາບໍລິສັດ ຫຼື ຫ້າງຮ້ານ ທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຮ່ວມຍື່ນຊອງປະມູນສຳລັບການສະໜອງວັດຖຸອຸປະກອນໄອຊີທີໃຫ້ບັນດາກົມພາຍໃນ ກະຊວງການເງິນ.
2. ການປະມູນແມ່ນຈະດຳເນີນຕາມຂັ້ນຕອນປະມູນເປີດກວ້າງທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ຫຼື ຫ້າງຮ້ານ ທີ່ດຳເນີນທຸລະກິດຢູ່ ສປປ ລາວ, ເຊິ່ງມີເງື່ອນໄຂຄົບຖ້ວນເຊັ່ນ: ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ມີເລກປະຈຳຕົວຜູ້ເສຍອາກອນ, ໃບຢັ້ງຢືນການປະຕິບັດພັນທະພາສີອາກອນ ຖືກຕ້ອງຕາມກົດໝາຍ;
4. ບໍລິສັດ ຫຼື ຫ້າງຮ້ານ ທີ່ສົນໃຈເຂົ້າຮ່ວມປະມູນ ສາມາດຕິດຕໍ່ພົວພັນເອກະສານຄົບຊຸດໄດ້ທີ່ຫ້ອງການ ກະຊວງການເງິນ (ເບີໂທລະສັບ: 020 55553594) ໃນໂມງລັດຖະການ, ນັບແຕ່ວັນທີ **03** ພະຈິກ 2026 ເຖິງ 01 ທັນວາ 2026, ລາຄາຊອງປະມູນ 3,000,000 ກີບ ແລະ ໃນຈຳນວນເງິນດັ່ງກ່າວນີ້ແມ່ນລະບໍ່ມີການສົ່ງຄືນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ,ຂອງວັນທີ 02 ທັນວາ 2026 ທີ່ຫ້ອງການ ກະຊວງການເງິນ, ຊອງປະມູນທີ່ສົ່ງຊ້າຈະຖືກປະຕິເສດ ແລະ ຖືກສົ່ງກັບໂດຍບໍ່ມີການເປີດຊອງຄືນໃຫ້ຜູ້ປະມູນ, ຊອງປະມູນທັງໝົດຈະໄດ້ເປີດໃນເວລາ 14:00ໂມງ ຂອງວັນທີ 02 ທັນວາ 2026 ທີ່ ຫ້ອງປະຊຸມ ຊັ້ນ 01 ຕຶກ**B** ກະຊວງການເງິນ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ບັນດາຕາງໜ້າຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ.
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະມູນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຫຼື ເງິນສົດ, ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງລາຄາປະມູນມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງການເງິນ ຫ້ອງການ

ພົງສະຫວັນ ລາດທິຈັກ